ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 322 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2019

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍ ການປະກາດໃຫ້ສັດຕະຍາບັນແກ່ສົນທິສັນຍາ ລະຫວ່າງລັດຖະບານ ວ່າດ້ວຍ ທ່າບົກ ຂອງຄະນະກຳມະທິການອົງການສະຫະປະຊາຊາດ ດ້ານ ເສດຖະກິດ ແລະ ສັງຄົມປະຈຳພາກພື້ນອາຊີ-ປາຊີຟິກ.

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VIມາດຕາ 67 ຂໍ້ 14;
- ອີງຕາມ ກົດໝາຍວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ ສະບັບເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017 ມາດຕາ 44;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບ ເລກທີ 26 /ຄປຈ, ລົງວັນທີ 25 ກັນຍາ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດການໃຫ້ສັດຕະຍາບັນແກ່ສົນທິສັນຍາ ລະຫວ່າງລັດຖະບານ ວ່າດ້ວຍ ທ່າບົກ ຂອງຄະນະກຳມະທິການອົງການສະຫະປະຊາຊາດ ດ້ານ ເສດຖະກິດ ແລະ ສັງຄົມປະຈຳພາກພື້ນອາຊີ-ປາຊີຟິກ.

**ມາດຕາ 2** ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຄົາລົບ ແລະ ປະຕິບັດສົນທິສັນຍາສາກົນສະບັບນີ້ ມອບໃຫ້ກະຊວງການຕ່າງປະເທດ ຈັດຕັ້ງປະຕິບັດຕາມຂັ້ນຕອນທາງການທູດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 3** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

**ບຸນຍັງ ວໍລະຈິດ**